# ປະຫວັດທະນາຄານ

ທະນາຄານແຫ່ງ ສປປ ລາວ ພາກເໜືອທີ່ແຂວງອຸດົມໄຊ ແມ່ນໜຶ່ງໃນກົງຈັກການຈັດຕັ້ງຂອງທະນາຄານແຫ່ງ ສປປ ລາວ, ດ້ານການຈັດຕັ້ງພະນັກງານ ແລະ ວິຊາການແມ່ນຂຶ້ນກັບການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ, ສ່ວນທາງດ້ານການເມືອງ-ແນວຄິດ ແລະ ການເຄື່ອນໄຫວວຽກງານຂອງອົງການຈັດຕັ້ງມະຫາຊົນແມ່ນຂຶ້ນກັບອຳນາດການປົກຄອງທ້ອງຖິ່ນທີ່ຕັ້ງຢູ່. ທະນາຄານແຫ່ງ ສປປ ລາວ ພາກເໜືອທີ່ແຂວງ ອຸດົມໄຊ ໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 12 ກໍລະກົດ ປີ 2001 ມີສຳນັກງານຕັ້ງຢູ່ບ້ານ ພູຂຽວ ເມືອງ ໄຊ ແຂວງ ອຸດົມໄຊ, ໃນເບື້ອງຕົ້ນປະກອບມີພະນັກງານທັງໝົດ 11 ທ່ານ,ຍິງ 2 ທ່ານ,ໃນນີ້ສັບຊ້ອນມາຈາກທະນາຄານລ້ານຊ້າງ 7 ທ່ານ, ຈາກສຳນັກງານໃຫ່ຍ 1 ທ່ານຮັບເຂົ້າໃໝ່ 3 ທ່ານ,ປະກອບມີ 4 ໜ່ວຍງານ(ຫ້ອງການບໍລິຫານ-ຈັດຕັ້ງ,ໜ່ວຍງານບໍລິການ-ບັນຊີ, ໜ່ວຍງານສາງ-ຄັງເງິນສົດ ແລະ ໜ່ວຍງານຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ)ໃສ່ຊື່ວ່າ:ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ,ມີສິດແລະໜ້າທີໃນການຄຸ້ມຄອງມະຫາພາກທາງດ້ານການເງິນ-ເງິນຕາ, ສິນເຊື່ອໃຫ້ຄະນະພັກ ແລະ ອຳ ນາດການປົກຄອງທ້ອງຖິ່ນທີ່ຕົນຮັບຜິດຊອບ,ປະກອບສ່ວນສົ່ງເສີມ, ປົກປັກຮັກສາສະຖຽນລະພາບຂອງເງິນກີບ, ຍົກສູງປະສິດຕິພາບກົນໄກຊຳລະໜີ້ຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນໃນພື້ນທີ່ຕາມນະໂຍບາຍຂອງທະນາຄານແຫ່ງ ສປປ ລາວ ວາງອອກໃນແຕ່ລະໄລຍະເພື່ອແນ່ໃສ່ພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນໃຫ້ມີການພັດທະນາຕາມ ແນວທາງປ່ຽນແປງໃຫ່ມຂອງພັກ-ລັດເຮົາ. ເຄື່ອນໄຫວຄຸ້ມຄອງ, ກວດກາ ແລະ ຊຸກຍູ້ບັນດາສາຂາທະນາຄານທຸລະກິດທີ່ຕັ້ງຢູ່ 8 ແຂວງທາງພາກເໜືອ (ແຂວງອຸດົມໄຊ, ແຂວງຫຼວງພະບາງ, ແຂວງໄຊຍະບູລີ, ແຂວງຊຽງຂວາງ, ແຂວງຫົວພັນ, ແຂວງຜົ້ງສາລີ, ແຂວງຫຼວງນ້ຳທາ ແລະ ແຂວງບໍ່ແກ້ວ).

ມາຮອດປີ 2008 ໄດ້ມີການແບ່ງເຂດການຄຸ້ມຄອງຢູ່ເຂດພາກເໜືອອອກເປັນສອງເຂດຕາມທິດຂະຫຍາຍຕົວທາງດ້ານເສດຖະກິດໃນແຕ່ລະແຂວງແມ່ນມີທ່າອ່ຽງຂະຫຍາຍຕົວຢ່າງຕໍ່ເນື່ອງເພື່ອຮັບປະກັນທາງດ້ານສະພາບຄ່ອງ ແລະ ຄວາມໝັ້ນຄົງຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນໃຫ້ຍືນຍົງ ແລະ ຂະຫຍາຍໄປຕາມແນວທາງແຜນນະໂຍບາຍ ແລະ ຍຸດທະສາດ ການພັດທະນາເສດຖະກິດ-ສັງຄົມຢູ່ແຕ່ລະພາກໃຫ້ມີຄວາມເຂັ້ມ ແຂງ,ສະນັ້ນເພື່ອສະດວກທ່ວງທັນໃນການຄຸ້ມຄອງກວດກາບັນດາທະນາຄານທຸລະກິດ,ສະຖາບັນການເງິນ ແລະ ກ່ຽວກັບຂໍ້ກຳນົດຄຳສັ່ງແນະນຳ,ລະບຽບການ ແລະ ແຈ້ງການຕ່າງໆທີ່ກ່ຽວຂ້ອງຂອງທະນາຄານແຫ່ງ ສປປລາວ ວາງອອກໃຫ້ປະກົດຜົນເປັນຈິ່ງພ້ອມກັນນີ້ໄດ້ປ່ຽນຊື່ມາເປັນທະນາຄານແຫ່ງ ສປປ ລາວພາກເໜືອທີ່ແຂວງອຸດົມໄຊ ເຄື່ອນໄຫວຄຸ້ມຄອງທະນາຄານທຸລະກິດຢູ່ 4 ແຂວງພາກເໜືອຕອນເທິງ(ແຂວງອຸດົມໄຊ,ແຂວງຜົ້ງສາລີ,ແຂວງຫຼວງນ້ຳທາ ແລະ ແຂວງບໍ່ແກ້ວ).

ມາຮອດ ທ້າຍປີ 2009 ໄດ້ເປີດນຳໃຊ້ຫ້ອງການຫຼັງໃໝ່ຕັ້ງຢູ່ ບ້ານວັງໄຮ ເມືອງໄຊ ແຂວງອຸດົມໄຊເປັນອາຄານທີ່ໃຫ່ຍກວ່າເກົ່າເຊິ່ງໄດ້ນຳໃຊ້ລະບົບເທັກໂນ ໂລຊີທີ່ທັນສະໄຫມມີລະບົບຮັກສາຄວາມປອດໄພທີ່ດີມີຫ້ອງເຮັດ ວຽກທີ່ກ້ວາງຂວາງສາມາດຮອງຮັບພະນັກງານໄດ້ຫຼາຍຂຶ້ນ.ມາຮອດປັດຈຸບັນມີພະນັກງານທັງໝົດຈຳນວນ 58 ຄົນ ຍິງ 29 ຄົນ, ປະກອບມີ ຫົວໜ້າ 1 ສະຫາຍ ( ທ່ານ ບຸນໄທ ສຸພັດທອນ),ຮອງ 2 ສະຫາຍ ( ທ່ານ ວຽງສະຫ້ວນ ໄຊຍະວົງ ແລະ ທ່ານ ນາງ ຄຳຫຼ້າ ສຸລິຍານົນ).

- ນັບແຕ່ເລີ່ມສ້າງຕັ້ງເປັນທະນາຄານແຫ່ງ ສປປ ລາວ ພາກເໜືອທີ່ແຂວງອຸດົມໄຊໄດ້ມີການເຕີບໃຫ່ຍຂະ ຫຍາຍຕົວຕາມຈັງຫວະກົນໄກເສດຖະກິດຈາກຜູ້ບໍລິຫານລິເລີ້ມຈົນເຖິ່ງຜູ້ບໍລິຫານປັດຈຸບັນປະກອບມີທ່ານຜູ້ບໍລິຫານຫຼາຍທ່ານ ໃນແຕ່ລະໄລຍະລະອຽດດັ່ງນີ້:

- 2001-2003 ທ່ານ ປະມູນ ບັນທະວົງ ເປັນຫົວໜ້າທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ
- 2004-2005 ທ່ານ ສົມວັນ ເລື່ອງວິຫານ ເປັນຫົວໜ້າທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ
- 2005-2006 ທ່ານ ສີຈັນ ເຢັມມະນີ ຮັກສາການຫົວໜ້າທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ
- 2006-2007 ທ່ານ ວັນຄຳ ດວງມະນີຈັນ ເປັນຫົວໜ້າທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ
- 2008-ປັດຈຸບັນ ທ່ານ ບຸນໄທ ສຸພັດທອນ ຫົວໜ້າທະນາຄານແຫ່ງ ສປປ ລາວ ພາກເໜືອທີ່ແຂວງອຸດົມໄຊ

- ທະນາຄານແຫ່ງ ສປປ ລາວ ພາກເໜືອທີ່ ແຂວງ ອຸດົມໄຊ ປະກອບມີ 6 ພະແນກ:

1. ພະແນກຫ້ອງການ-ຈັດຕັ້ງ
2. ພະແນກບໍລິການ-ການບັນຊີ
3. ພະແນກສາງ-ຄັງເງິນສົດ
4. ພະແນກຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ
5. ພະແນກເສດຖະກິດ-ເງິນຕາ ແລະ ຄຸ້ມຄອງເງິນຕາຕ່າງປະເທດ
6. ພະແນກກວດກາພາຍໃນ

ໃນເບື້ອງຕົ້ນຍັງມີຄວາມອ່ອນນ້ອຍ,ຂາດເຂີນທາງດ້ານບຸກຄະລາກອນ ແລະ ວັດຖຸອຸປະກອນຮັບໃຊ້ກໍ່ເກົ່າແກ່ຫລ້າຫລັງແຕ່ຍ້ອນຄວາມບຸກບືນເປັນຈິດໜຶ່ງໃຈດຽວກັນພາຍໃຕ້ການນຳພາຂອງອົງຄະນະພັກ,ຄະນະຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ແລະ ບັນດາກົມກໍ່ຄືທະນາຄານແຫ່ງ ສປປ ລາວ ພາກເໜືອທີ່ແຂວງອຸດົມໄຊ ໄດ້ເດີນ ຕາມແນວທາງຂອງພັກ,ລະບຽບກົດໝາຍຂອງລັດ ແລະ ໄດ້ເຕີບໃຫຍ່ຂະຫຍາຍຕົວຢ່າງຮອບດ້ານນັບທັງບຸກຄະລາກອນ,ຖານະການເງິນ ແລະ ອຸປະກອນເຕັກນິກທີ່ທັນສະໄໝ,ຢູ່ໃຕ້ຮົ່ມທຸງຂອງ ພັກປະຊາຊົນ ປະຕິວັດລາວ ແລະ ດ້ວຍຄວາມເອົາໃຈໃສ່ຊີ້ນຳນຳພາຂອງຂັ້ນເທິງກໍ່ຄືອຳນາດການປົກຄອງທອງ ຖິ່ນ ແລະ ພະນັກງານແຕ່ລະລຸ້ນແຕ່ລະທ່ານບໍ່ວ່າລຸ້ນກ່ອນກໍ່ຄືລຸ້ນສືບທອດທຸກຄົນໄດ້ພ້ອມພຽງຮຽງໜ້າກັນສຸມທຸກສະຕິປັນຍາ ແລະ ຄວາມຮູ້ຄວາມສາມາດຂອງຕົນເອງເຂົ້າໃນວຽກງານວິຊາສະເພາະເພື່ອເຮັດຫລ້ອນໜ້າທີ່ອັນມີກຽດທີ່ພັກ ແລະ ລັດມອບໝາຍໃຫ້ກໍ່ຄືຍົກສູງຄວາມຮັບຜິດຊອບຕໍ່ການເປັນເສນາທິການໃຫ້ແກ່ຄະນະຜູ້ວ່າການທະນາຄານແຫ່ງສປປລາວ.

ຂຽນໂດຍ: ສົມວິໄຊ ຫຼວງໄຊສຸກ